# ສຳເລັດກອງປະຊຸມພະນັກງານສຳນັກງານ ຄລຕ




ຂ່າວ - ພາບ : ຣັດສະໝີ ດວງສັດຈະ

ໃນວັນທີ 6 ກໍລະກົດຜ່ານມານີ້ທີ່ຫ້ອງປະຊຸມທະນາຄານສົ່ງເສີມກະສິກຳນະຄອນຫຼວງວຽງຈັນ ໄດ້ຈັດກອງປະຊຸມພະນັກງານສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ( ສຄລຕ ) ແຫ່ງ ສປປລາວ ຂຶ້ນຢ່າງເປັນທາງການໂດຍການເປັນກຽດເຂົ້າຮ່ວມຂອງສະຫາຍ ພູເພັດ ຄຳພູນວົງ ເລຂາຄະນະພັກ, ຜູ້ວ່າການທະນາຄານແຫ່ງ ສປປລາວ ( ທຫລ ), ບັນດາກົມ ແລະ ພະນັກງານທີ່ກ່ຽວຂ້ອງກໍໄດ້ເຂົ້າຮ່ວມ.

ໃນກອງປະຊຸມດັ່ງກ່າວ ສະຫາຍ ດຣ ອາຄົມ ປູະເສີດ ຮອງເລຂາໜ່ວຍພັກ, ຮອງຫົວໜ້າ ສຄລຕ ໄດ້ຂຶ້ນຜ່ານບົດລາຍງານການເມືອງຂອງໜ່ວຍພັກຄະນະຮັບຜິດຊອບຕະຫຼາດຫຼັກຊັບຕໍ່ກອງປະຊຸມພະນັກງານໂດຍຊີ້ບອກວ່າ : ໜ່ວຍພັກຄະນະຮັບຜິດຊອບຕະຫຼາດຫຼັກຊັບມີບົດບາດເປັນເສນາທິການໃຫ້ຄະນະພັກ ທຫລ ໃນການຊີ້ນຳຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແນວທາງຂອງພັກໃນການຄົ້ນຄວ້າ, ວາງແຜນການສ້າງຂໍ້ກຳນົດ,ລະບຽບການ, ນິຕິກຳທີ່ກ່ຽວຂ້ອງເພື່ອຄຸ້ມຄອງວຽກງານຕະຫຼາດທຶນ ແລະ ຊຸກຍູ້ສົ່ງເສີມການສ້າງ ແລະ ພັດທະນາຕະຫຼາດ

ຫຼັກຊັບໃຫ້ມີຄວາມໝັ້ນຄົງ, ເປັນທຳ, ປອດໃສ ແລະ ປົກປ້ອງຜູ້ລົງທຶນ, ສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ.

ສະຫາຍ ດຣ ອາຄົມ ຍໍ້າຕື່ມວ່າ : ໜ່ວຍພັກໄດ້ຮັບການສ້າງຕັ້ງຂຶ້ນໃນເດືອນ ມິຖຸນາ ຂອງປີ 2008 ເຊິ່ງໃນປະຈຸບັນປະກອບມີສະມາຊິກພັກ 7 ສະຫາຍ, ມີພະນັກງານທັງໝົດ 42 ສະຫາຍ, ລະດັບປະລິນຍາເອກ 2 ສະຫາຍ,ໂທ 14 ສະຫາຍ, ຕີ 25 ສະຫາຍ ແລະ ຊັ້ນສູງ 1 ສະຫາຍ ແລະ ໃນຜ່ານມາສາມາດຍາດໄດ້ຜົນງານໂດດເດັ່ນໃນຫຼາຍດ້ານໂດຍສະເພາະແມ່ນການກະກຽມຮອບດ້ານໃຫ້ແກ່ການເປີດຕະຫຼາດຫຼັກຊັບໃນທ້າຍປີນີ້. ພ້ອມນັ້ນໜ່ວຍພັກຍັງໄດ້ວາງທິດທາງແຜນການແຕ່ນີ້ຫາປີ 2012 ໂດຍສືບຕໍ່ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນໜ່ວຍພັກ, ຍົກສູງຄວາມສາມາດໃນການຊີ້ນຳ-ນຳພາໃນແຕ່ລະດ້ານຕາມພາລະບົດບາດຂອງໜ່ວຍພັກ ສຄລຕ ແລະ ຕະຫຼາດຫຼັກຊັບ ເພື່ອປະຕິບັດບົດບາດເປັນແກນນຳໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນພາຍໃຕ້ການຊີ້ນຳ-ນຳພາຂອງຄະນະພັກທຫລ.

ໃນກອງປະຊຸມດັ່ງກ່າວໄດ້ຮັບການແຕ່ງຕັ້ງສະຫາຍ ນາງ ວັດທະນາ ດາລາລອຍ ເປັນເລຂາໜ່ວຍພັກຄົນໃໝ່. ກອງປະຊຸມໄດ້ດຳເນີນການຄັດເລືອກເອົາຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ່ II ຂອງອົງຄະນະພັກທຫລ, ຈາກນັ້ນ ສະຫາຍເລຂາຄະນະພັກ ທຫລ ພູເພັດ ຄຳພູນວົງ ກໍໄດ້ໂອ້ລົມ ແລະ ໃຫ້ທິດຊີ້ນຳແກ່ກອງປະຊຸມດັ່ງກ່າວ.